ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ
Lao Culture Tourism Public Group Company

ເລກທີ 292 /ບທວລ
ນະຄອນຫຼວງວຽງຈັນ, ວັນທີ 11 NOV 2024

ຮຽນ : ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖື;

ທ່ານ ຜູ້ອຳນວຍການໃຫ່ຍ ຕະຫຼາດຫຼັກຊັບລາວ ທີ່ນັບຖື;

ທ່ານ ຜູ້ຖືຮຸ້ນ ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ທີ່ນັບຖື,

ເລື່ອງ : ແຈ້ງມະຕິກອງປະຊຸມວິສາມັນສະພາບໍລິຫານ ຄັ້ງທີ 1 ປີ 2024

- ອີງຕາມຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ (ສະບັບປັບປຸງ) ສະບັບເລກທີ 27/ສສຄ ລົງວັນທີ 29 ມີນາ ປີ 2022.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວວ່າດວ້ຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ ຕລຊລ, ລົງວັນທີ 27 ກັນຍາ 2018.

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ (ບທວລ) ຂໍຖືເປັນກຽດແຈ້ງມະຕິກອງປະຊຸມວິສາມັນສະພາບໍລິຫານ ຄັ້ງທີ 01 ປີ 2024 ໃນວັນທີ 11 ພະຈິກ 2024 ເວລາ 9:00 ໂມງ ຢູ່ທີ່ສຳນັກງານໃຫ່ຍ ຂອງກຸ່ມບໍລິສັດ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້ :

1. ພິຈາລະນາ ແລະຮັບຮອງກ່ຽວກັບການປັບປຸງກຳມະການສະພາບໍລິຫານຝ່າຍຈີນ.
2. ພິຈາລະນາ ແລະຮັບຮອງ ກ່ຽວກັບວ່າຈ້າງຜູ້ອຳນວຍການໃຫ່ຍ ຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ.
3. ພິຈາລະນາ ແລະຮັບຮອງ ກ່ຽວກັບບົດວິພາກເສດຖະກິດ-ເຕັກນິກໂຄງການພັດທະນາເຂດເສດຖະກິດ-ອຸດສາຫະກຳທ່ອງທ່ຽວ ວັດທະນະທຳລາວ ເມືອງວັງວຽງ ແຂວງວຽງຈັນ ສປປລາວ.
4. ພິຈາລະນາ ແລະຮັບຮອງ ກ່ຽວກັບການສະເໜີຍົກລະດັບຂອງໂຄງການກໍ່ສ້າງເຂດເສດຖະກິດ ອຸດສາຫະກຳການທ່ອງທ່ຽວ ແລະ ວັດທະນະທຳ ວັງວຽງ
5. ພິຈາລະນາ ແລະຮັບຮອງກ່ຽວກັບການປະເມີນ ແລະສະສາງຊັບສົມບັດຂອງໂຮງງານ ຊີມັງວັງ ວຽງ ຫຼັງ 2

ດັ່ງນັ້ນ, ຈຶ່ງຮຽນມາເພື່ອຊາບ ແລະໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືຢ່າງສູງ.

ປະທານສະພາບໍລິຫານ

ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳ ລາວ ມະຫາຊົນ Lao Culture Tourism Public Group Company

ເນ້ຍເຫຼ່ຍ

ບ້ານໂພນພະເນົາ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ ສປປ ລາວ
Phonphanao Village, Saysettha District, Vientiane Capital, Lao PDR
Tel: (856-21) 451116, 451222, Facebook: Lao Culture Tourism Public Group Company